ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 076 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20-7-09

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍນ້ຳປະປາ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 134/ສພຊ, ລົງວັນທີ 9 ກໍລະກົດ 2009 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍນ້ຳປະປາ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 53/ຄປຈ, ລົງວັນທີ 16 ກໍລະກົດ 2009.

*ປະທານປະເທດ*

***ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :***

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍນ້ຳປະປາ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມະລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 134 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ນ້ຳປະປາ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ນ້ຳປະປາ ໃນວາລະປະຊຸມຕອນເຊົ້າຂອງວັນທີ 9 ກໍລະກົດ 2009,

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ນ້ຳປະປາ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 9 ກໍລະກົດ 2009

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 04 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 9 ກໍລະກົດ 2009

# ກົດໝາຍ
# ວ່າດ້ວຍ ນ້ຳປະປາ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍ ວ່າດ້ວຍ ນ້ຳປະປາ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການສົ່ງເສີມ, ການຄຸ້ມຄອງ ແລະ ການກວດກາ ກິດຈະການ, ທຸລະກິດນ້ຳປະປາ ເພື່ອຊຸກຍູ້ການຜະລິດ, ການສະໜອງນ້ຳປະປາ ແກ່ຜູ້ຊົມໃຊ້ທັງຢູ່ໃນຕົວເມືອງ ແລະ ຊົນນະບົດ ໃຫ້ນັບມື້ນັບກວ້າງຂວາງ, ທົ່ວເຖິງ ແລະ ພຽງພໍ ແນໃສ່ຮັບປະກັນຄວາມປອດໄພດ້ານສຸຂະພາບ ແລະ ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າໃຫ້ສູງຂຶ້ນ, ປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ- ສັງຄົມຂອງຊາດ.

### ມາດຕາ 2. ນ້ຳປະປາ

ນ້ຳປະປາ ແມ່ນ ນ້ຳທີ່ໄດ້ມາຈາກແຫຼ່ງນ້ຳ ໜ້າດິນ, ໃຕ້ດິນ, ນ້ຳອອກບໍ່ ແລະ ແຫຼ່ງນ້ຳອື່ນ ມາຜະລິດເປັນນ້ຳ ທີ່ສະອາດ, ປອດໄພ ແລະ ໄດ້ມາດຕະຖານ ຕາມກຳມະວິທີ ແລະ ຂະບວນການຕ່າງໆ ທາງດ້ານເຕັກນິກ ໂດຍປາສະຈາກ ສານພິດ, ເຊື້ອພະຍາດ ແລະ ສານເຄມີ ເຈືອປົນເກີນປະລິມານ ທີ່ອະນຸຍາດໃຫ້ ເພື່ອສະໜອງໃຫ້ຜູ້ບໍລິໂພກໄດ້ຊົມໃຊ້ເຂົ້າໃນເປົ້າໝາຍຕ່າງໆ.

### ມາດຕາ 3. ການອະທິບາຍຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍ ສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການບໍລິການນ້ຳປະປາ** ໝາຍເຖິງ ການສົ່ງ ແລະ ແຈກຢາຍ ນ້ຳປະປາ ໃຫ້ແກ່ຜູ້ຊົມໃຊ້ ຢ່າງທົ່ວເຖິງ ແລະ ເປັນປົກກະຕິ ໃນພື້ນທີ່ບໍລິການ ໃນລາຄາທີ່ສົມເຫດສົມຜົນ ແລະ ທຸກຄົນສາມາດຈ່າຍໄດ້;
2. **ລະບົບໂຄງລ່າງນ້ຳປະປາ** ໝາຍເຖິງ ອາຄານ, ສິ່ງກໍ່ສ້າງ, ໂຮງງານຜະລິດນ້ຳປະປາ, ອ່າງເກັບນ້ຳ, ລະບົບທໍ່ສົ່ງ ແລະ ທໍ່ແຈກ ພ້ອມດ້ວຍສິ່ງອຳນວຍຄວາມສະດວກ ທີ່ໄດ້ກໍ່ສ້າງ, ຕິດຕັ້ງ, ນຳໃຊ້ ໂດຍຜູ້ບໍລິການນ້ຳປະປາ ເພື່ອຈຸດປະສົງສະໜອງໃຫ້ແກ່ຜູ້ໃຊ້ບໍລິການ ແລະ ເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ;
3. **ແຫຼ່ງນ້ຳໜ້າດິນ** ໝາຍເຖິງ ແມ່ນ້ຳລຳເຊ, ຫ້ວຍ, ໜອງ, ບຶງ ແລະ ອື່ນໆ;
4. **ກຳມະວິທີ** ໝາຍເຖິງ ວິທີການ, ຂະບວນການ ແລະ ຂັ້ນຕອນ ການຜະລິດນ້ຳປະປາ;
5. **ນ້ຳທີ່ມີຄຸນນະພາບ** ໝາຍເຖິງ ນ້ຳທີ່ໄດ້ມາດຕະຖານທາງດ້ານຄວາມສະອາດ ແລະປອດໄພ ສຳລັບການບໍລິໂພກ ຕາມລະບຽບການ ທີ່ກະຊວງສາທາລະນະສຸກ ວາງອອກ;
6. **ສຸຂາພິບານ** ໝາຍເຖິງ ການດຳເນີນການເກັບມ້ຽນ, ການເຄື່ອນຍ້າຍ, ການກຳຈັດ, ການບຳບັດ ນ້ຳເປື້ອນຈາກຄົວເຮືອນ, ນ້ຳເສດເຫຼືອຈາກການນຳໃຊ້ຕ່າງໆ ລວມທັງການລ້າງວິດຖ່າຍ, ກຳຈັດ ສິ່ງເສດເຫຼືອຂອງຄົນ ເພື່ອບໍ່ໃຫ້ໄຫຼໄປສູ່ແຫຼ່ງນ້ຳ ແລະ ລະບົບນ້ຳປະປາ ແນໃສ່ຮັກສາສຸຂະພາບ ຂອງຄົນ;
7. **ຜູ້ສຳປະທານທຸລະກິດນ້ຳປະປາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ຫຼື ໄດ້ຮັບການມອບສິດ ໃຫ້ກໍ່ສ້າງລະບົບໂຄງລ່າງ ແລະ ດຳເນີນທຸລະກິດນ້ຳປະປາ ຕາມສັນຍາສຳປະທານ;
8. **ຜູ້ບໍລິການນ້ຳປະປາ** ໝາຍເຖິງ ຜູ້ສຳປະທານ ຫຼື ຜູ້ທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນທຸລະກິດນ້ຳປະປາ;
9. **ຜູ້ໃຊ້ບໍລິການນ້ຳປະປາ** ໝາຍເຖິງ ບຸກຄົນ ຫຼື ການຈັດຕັ້ງ ທີ່ຊົມໃຊ້ນ້ຳປະປາ ແລະ ຈ່າຍຄ່ານ້ຳປະປາ ຕາມຂໍ້ຜູກພັນທີ່ໄດ້ເຊັນກັບຜູ້ບໍລິການນ້ຳປະປາ;
10. **ພື້ນທີ່ບໍລິການ** ໝາຍເຖິງ ພື້ນທີ່ດ້ານພູມສາດ ຊຶ່ງກຳນົດຂອບເຂດການບໍລິການແກ່ຜູ້ຊົມໃຊ້ ໃນຕົວເມືອງ ແລະ ຊົນນະບົດ ຫຼື ກຸ່ມບ້ານ ເພື່ອຮັບປະກັນການບໍລິການນ້ຳປະປາ ໃຫ້ພຽງພໍ ແລະ ເປັນປົກກະຕິ;
11. **ຕາຂ່າຍນ້ຳປະປາ** ໝາຍເຖິງ ລະບົບການສົ່ງນ້ຳປະປາຈາກບ່ອນຜະລິດ ເຖິງສະຖານທີ່ບໍລິໂພກ ຊຶ່ງປະກອບດ້ວຍ ທໍ່ສົ່ງ, ທໍ່ແຈກ, ປະຕູນ້ຳ, ສະຖານີສູບສົ່ງນ້ຳ ແລະ ທໍ່ເຂົ້າສະຖານທີ່ຂອງຜູ້ຊົມໃຊ້ ນ້ຳປະປາ;
12. **ສິ່ງອຳນວຍຄວາມສະດວກໃນວຽກງານນ້ຳປະປາ** ໝາຍເຖິງ ສິ່ງທີ່ຊ່ວຍໃນການບໍລິການ, ການຄຸ້ມຄອງ, ການດຳເນີນງານ, ການບູລະນະຮັກສາ ແລະ ການສ້ອມແປງ ລະບົບນ້ຳປະປາ ເຊັ່ນ: ເດີ່ນ, ເສັ້ນທາງ, ໂຮງຊ່າງສ້ອມແປງ, ສະຖານີໝໍ້ແປງໄຟ, ຂຸມປະຕູນ້ຳ, ໝໍ້ແທກນ້ຳ, ອ່າງເກັບນ້ຳ, ສະຖານີສູບສົ່ງນ້ຳ, ຫ້ອງການ, ຫ້ອງວິໄຈນ້ຳ, ສາງເຄື່ອງ ແລະ ອື່ນໆ;

13. **ອຸປະກອນນ້ຳປະປາ ໝາຍເຖິງ** ໝໍ້ແທກນ້ຳ, ເຄື່ອງວັດແທກ ແລະ ຄວບຄຸມແຮງດັນ, ເຄື່ອງກວດການ້ຳຮົ່ວໄຫຼ, ທໍ່, ຈັກສູບສົ່ງ, ເຄື່ອງປະກອບ, ອຸປະກອນເສີມ ແລະ ອື່ນໆ;
14. **ການດັດສົມ ໝາຍເຖິງ** ການດັດປັບຂອງລັດ ທາງດ້ານເຕັກນິກ ແລະ ເສດຖະກິດ ເພື່ອຮັບປະກັນ ໃຫ້ຜູ້ດຳເນີນທຸລະກິດນ້ຳປະປາ ສາມາດເຄື່ອນໄຫວທຸລະກິດຢ່າງມີປະສິດທິຜົນ ແລະ ຜູ້ໃຊ້ບໍລິການ ສາມາດຊົມໃຊ້ນ້ຳປະປາ ຢ່າງມີຄຸນນະພາບ ໃນລາຄາທີ່ສົມເຫດສົມຜົນ ແລະ ທຸກຄົນສາມາດຈ່າຍໄດ້;
15. **ນະໂຍບາຍລາຄານ້ຳປະປາຂອງລັດຖະບານ ໝາຍເຖິງ** ການວາງຂອບລາຄານ້ຳປະປາທີ່ສົມເຫດສົມຜົນ ເພື່ອໃຫ້ຜູ້ບໍລິການນ້ຳປະປາ ສາມາດດຳເນີນທຸລະກິດຢ່າງມີປະສິດທິຜົນ, ຍືນຍົງ ແລະ ໃຫ້ທຸກຄົນສາມາດໄດ້ຊົມໃຊ້ນ້ຳປະປາ ທີ່ຮັບປະກັນທາງດ້ານປະລິມານ, ຄຸນນະພາບ ແລະ ສາມາດ ຈ່າຍຄ່ານ້ຳປະປາໄດ້.

## ມາດຕາ 4. ນະໂຍບາຍຂອງລັດ ກ່ຽວກັບ ວຽກງານນ້ຳປະປາ

ລັດ ສົ່ງເສີມໃຫ້ພາກສ່ວນເສດຖະກິດຂອງລັດ ກໍຄືພາກສ່ວນເສດຖະກິດອື່ນ ທັງພາຍໃນ ແລະ ຕ່າງປະເທດ ລວມທັງ ການຈັດຕັ້ງຊຸມຊົນລົງທຶນເຂົ້າໃນ ການກໍ່ສ້າງລະບົບໂຄງລ່າງນ້ຳປະປາ, ການຂະຫຍາຍຕາຂ່າຍນ້ຳປະປາ, ການພັດທະນາບຸກຄະລາກອນ, ການບູລະນະຮັກສາ, ການດຳເນີນທຸລະກິດ ນ້ຳປະປາໃນຕົວເມືອງ ແລະ ຊົນນະບົດ ເປັນຕົ້ນຢູ່ເຂດຫ່າງໄກ ດ້ວຍການປະຕິບັດນະໂຍບາຍ ສິນເຊື່ອ, ພາສີ, ອາກອນ, ການສະໜອງຂໍ້ມູນ, ຂ່າວສານ ແລະ ເຕັກໂນໂລຊີ.

ລັດ ຮັບຮູ້ກຳມະສິດຂອງຜູ້ລົງທຶນກໍ່ສ້າງ ລະບົບໂຄງລ່າງນ້ຳປະປາ ຕາມແຜນພັດທະນາເສດຖະກິດ-ສັງຄົມ ຕາມເຂດແຄວັນຕ່າງໆ ໃນທົ່ວປະເທດ ພ້ອມກັນນັ້ນ ລັດ ຊຸກຍູ້, ປຸກລະດົມທົ່ວສັງຄົມ ໃຫ້ມີສ່ວນຮ່ວມຢ່າງຕັ້ງໜ້າເຂົ້າໃນການວາງແຜນ, ການກໍ່ສ້າງ, ການນຳໃຊ້ ແລະ ການບູລະນະຮັກສາລະບົບໂຄງລ່າງນ້ຳປະປາ ເພື່ອຮັບປະກັນການສະໜອງນ້ຳໃຫ້ປະຊາຊົນຢ່າງທົ່ວເຖິງ, ພຽງພໍ ແລະ ປົກກະຕິ ໃນພື້ນທີ່ບໍລິການ.

ລັດ ສົ່ງເສີມໃຫ້ມີການຄຸ້ມຄອງທີ່ດີ ແລະ ມີການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຜະລິດນ້ຳປະປາ ເພື່ອເພີ່ມປະລິມານ, ຍົກສູງຄຸນນະພາບ ແລະ ສາມາດສົ່ງອອກໄດ້.

## ມາດຕາ 5. ຫຼັກການ ກ່ຽວກັບວຽກງານນ້ຳປະປາ

ການດຳເນີນວຽກງານນ້ຳປະປາ ຕ້ອງປະຕິບັດຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ສອດຄ່ອງ ກັບແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ຜັງເມືອງ, ຮັບປະກັນເປົ້າໝາຍ ແລະ ປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ;
2. ຮັບປະກັນ ການສະໜອງນ້ຳປະປາ ແກ່ຜູ້ຊົມໃຊ້ ຢ່າງທົ່ວເຖິງ, ພຽງພໍ ແລະ ປົກກະຕິ ໃນພື້ນທີ່ບໍລິການ;

3. ຮັບປະກັນ ກຳນົດໝາຍເສດຖະກິດ-ເຕັກນິກ ກ່ຽວກັບ ນ້ຳປະປາ, ມາດຕະຖານ ທາງດ້ານ ການບໍລິການ, ຄວາມສະອາດ ແລະ ຄວາມປອດໄພ ແກ່ຜູ້ໃຊ້ບໍລິການ, ຮັບປະກັນຄວາມກົມກຽວ ລະຫວ່າງ ສິດ, ພັນທະ ແລະ ຜົນປະໂຫຍດ ຂອງຜູ້ບໍລິການ ແລະ ຜູ້ໃຊ້ບໍລິການ;
4. ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຜະລິດນ້ຳປະປາ ໂດຍນຳໃຊ້ທຸກແຫຼ່ງນ້ຳ ແລະ ຊັບພະຍາກອນອື່ນ ກ່ຽວກັບການຜະລິດນ້ຳປະປາຂອງທ້ອງຖິ່ນ ໃຫ້ມີຄວາມຍືນຍົງ ເພື່ອສະໜອງໃຫ້ຜູ້ໃຊ້ບໍລິການ ສາມາດບໍລິໂພກ ຫຼື ນຳໃຊ້ເຂົ້າໃນຈຸດປະສົງອື່ນ ໂດຍມີການປະຢັດ ແລະ ສົມເຫດສົມຜົນ;
5. ປະສານສົມທົບກັນ ລະຫວ່າງ ບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງໃນການນຳໃຊ້ແຫຼ່ງນ້ຳຮ່ວມກັນ ຢ່າງມີປະສິດທິຜົນ ໂດຍໃຫ້ບູລິມະສິດ ແກ່ການຜະລິດນ້ຳປະປາ.

### ມາດຕາ 6. ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ ສຳລັບບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຜະລິດ, ການບໍລິການ ແລະ ການຊົມໃຊ້ ນ້ຳປະປາ ທັງຢູ່ຕົວເມືອງ ແລະ ຊົນນະບົດ.

ກົດໝາຍສະບັບນີ້ ບໍ່ກວມເອົາ ນ້ຳລິນ, ນ້ຳສ້າງ, ນ້ຳບາດານ ແລະ ນ້ຳຝົນ ທີ່ບໍ່ໄດ້ຜ່ານກຳມະວິທີ ແລະ ຂະບວນການຜະລິດທາງດ້ານເຕັກນິກແບບຄົບຊຸດ.

### ມາດຕາ 7. ການຮ່ວມມືສາກົນ

ລັດ ເປີດກວ້າງການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ, ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ກໍ່ສ້າງ, ບຳລຸງ, ຍົກລະດັບ ພະນັກງານ, ຍາດແຍ່ງການຊ່ວຍເຫຼືອ, ການຮ່ວມມືດ້ານການລົງທຶນ ແລະ ເຂົ້າຮ່ວມໃນການປະຕິບັດສັນຍາ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການດຳເນີນກິດຈະການນ້ຳປະປາ
## ໝວດທີ 1
## ກິດຈະການນ້ຳປະປາ

### ມາດຕາ 8. ບັນດາກິດຈະການນ້ຳປະປາ

ບັນດາກິດຈະການນ້ຳປະປາ ປະກອບດ້ວຍ ການວາງແຜນພັດທະນາ, ການສຶກສາຄວາມເປັນໄປໄດ້, ການສຳຫຼວດ-ອອກແບບ, ການກໍ່ສ້າງ ແລະ ການຕິດຕັ້ງ ລະບົບໂຄງລ່າງນ້ຳ

ປະປາ ແລະ ສຸຂາພິບານ, ການດຳເນີນງານ, ການບູລະນະຮັກສາ ແລະ ການສ້າງລະບົບຂໍ້ມູນ, ຂ່າວສານນ້ຳປະປາແຫ່ງຊາດ.

## ມາດຕາ 9. ການວາງແຜນພັດທະນາວຽກງານນ້ຳປະປາ

ການວາງແຜນພັດທະນາວຽກງານນ້ຳປະປາ ແມ່ນ ການສຶກສາຄົ້ນຄວ້າ ໂດຍນຳໃຊ້ຂໍ້ມູນທາງດ້ານເຕັກນິກວິຊາການ, ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ເພື່ອກຳນົດ ແຜນແມ່ບົດ, ແຜນຍຸດທະສາດ ແລະ ແຜນການລົງທຶນ ເຂົ້າໃສ່ການກໍ່ສ້າງ, ປັບປຸງ, ຂະຫຍາຍ ແລະ ບໍລິການນ້ຳປະປາ ຢູ່ບັນດາຕົວເມືອງ, ເຂດຊົນນະບົດ ແລະ ເຂດຈຸດສຸມພັດທະນາ.

ແຜນພັດທະນາວຽກງານນ້ຳປະປາ ຕ້ອງກົມກຽວກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

## ມາດຕາ 10. ການສຶກສາຄວາມເປັນໄປໄດ້ ຂອງໂຄງການນ້ຳປະປາ

ການສຶກສາຄວາມເປັນໄປໄດ້ ຂອງໂຄງການນ້ຳປະປາ ແມ່ນ ການເກັບກຳຂໍ້ມູນ, ການວິເຄາະທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແລ້ວສ້າງບົດລາຍງານ ໃຫ້ຂະແໜງການທີ່ກ່ຽວຂ້ອງ ໂດຍສະແດງໃຫ້ເຫັນ ທາງເລືອກທາງດ້ານເຕັກນິກ, ປະສິດທິຜົນຂອງການລົງທຶນ, ລາຄານ້ຳປະປາທີ່ເໝາະສົມ ແລະ ຄວາມຍືນຍົງຂອງໂຄງການ ລວມທັງ ວິທີການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ.

ທຸກໂຄງການນ້ຳປະປາ ຕ້ອງມີການສຶກສາຄວາມເປັນໄປໄດ້ ໂດຍໃຫ້ຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນ ມີສ່ວນຮ່ວມ.

## ມາດຕາ 11. ການສຳຫຼວດ-ອອກແບບ ລະບົບໂຄງລ່າງນ້ຳປະປາ

ການສຳຫຼວດ-ອອກແບບລະບົບໂຄງລ່າງນ້ຳປະປາ ແມ່ນ ການເກັບກຳຂໍ້ມູນ ແລະ ສະພາບແວດລ້ອມຮອບດ້ານຂອງໂຄງການ, ວິເຄາະ, ກຳນົດ ແນວຄິດການອອກແບບ, ການອອກແບບເບື້ອງຕົ້ນ, ການອອກແບບລະອຽດ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ວັດຖຸປະສົງຂອງໂຄງການ ພ້ອມທັງ ການປະເມີນມູນຄ່າ ແລະ ການກຳນົດເວລາ ໃນການກໍ່ສ້າງ.

ທຸກລະບົບໂຄງລ່າງນ້ຳປະປາ ທີ່ຈະສ້າງໃໝ່ ຫຼື ພັດທະນາ ຕ້ອງມີການສຳຫຼວດ-ອອກແບບ ຢ່າງຄົບຖ້ວນ.

## ມາດຕາ 12. ການກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຄງລ່າງນ້ຳປະປາ ແລະ ສຸຂາພິບານ

ການກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຄງລ່າງນ້ຳປະປາ ແມ່ນ ການກໍ່ສ້າງບັນດາໂຄງລ່າງນ້ຳປະປາ ລວມມີ ການກໍ່ສ້າງໂຮງງານ, ການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນສຳລັບການຜະລິດ ແລະ ການວິໄຈ ຄຸນນະພາບນ້ຳ, ການກໍ່ສ້າງອ່າງເກັບນ້ຳ, ການວາງລະບົບທໍ່ສົ່ງ ແລະ ທໍ່ແຈກເຂົ້າໄປຍັງທີ່ພັກອາໄສ, ອາຄານ ສະຖານທີ່ຕ່າງໆ ຂອງຜູ້ໃຊ້ບໍລິການ, ການຕິດຕັ້ງໝໍ້ແທກ

ນ້ຳ ລວມທັງ ການຕໍ່ທໍ່, ການຕິດຕັ້ງ ເຄື່ອງປະກອບ ແລະ ອຸປະກອນ ຢູ່ພາຍໃນທີ່ພັກອາໄສ ຫຼື ອາຄານ ສະຖານທີ່ ໃນພື້ນທີ່ບໍລິການ ທັງຢູ່ໃນຕົວເມືອງ ແລະ ຊົນນະບົດ.

ການກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຄງລ່າງສຸຂາພິບານ ແມ່ນ ການກໍ່ສ້າງບັນດາໂຄງລ່າງ, ການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນຕ່າງໆ ສໍາລັບການ ເກັບມ້ຽນ, ເຄື່ອນຍ້າຍ, ກໍາຈັດ ແລະ ບໍາບັດນ້ຳເປື້ອນ ຈາກຄົວເຮືອນ, ນ້ຳເສດເຫຼືອຈາກການນໍາໃຊ້ຕ່າງໆ ລວມທັງ ການສ້າງວິດຖ່າຍ, ກໍາຈັດສິ່ງເສດເຫຼືອຂອງຄົນ.

## ມາດຕາ 13. ການດໍາເນີນງານ

ການດໍາເນີນງານ ແມ່ນ ການຜະລິດ, ການບໍລິການ, ການບູລະນະຮັກສາ ຢ່າງເປັນປົກກະຕິ, ການປັບປຸງ ແລະ ການຂະຫຍາຍ ລະບົບໂຄງລ່າງນ້ຳປະປາ ໃນພື້ນທີ່ບໍລິການ ຂອງຜູ້ສໍາປະທານ, ຜູ້ບໍລິການ ເພື່ອຮັບປະກັນປະສິດທິຜົນ ທາງດ້ານເສດຖະກິດ-ເຕັກນິກ ແລະ ການບໍລິການ.

## ມາດຕາ 14. ການສ້າງລະບົບຂໍ້ມູນ, ຂ່າວສານນ້ຳປະປາແຫ່ງຊາດ

ການສ້າງລະບົບຂໍ້ມູນ, ຂ່າວສານນ້ຳປະປາແຫ່ງຊາດ ແມ່ນ ການສ້າງຖານຂໍ້ມູນ ດ້ວຍການເກັບກໍາ, ເຕົ້າໂຮມ, ວິໄຈ, ສັງລວມຂໍ້ມູນ, ຂ່າວສານດ້ານເຕັກນິກ, ເສດຖະກິດ, ການເງິນ-ການບັນຊີ ເພື່ອສະໜອງໃຫ້ແກ່ ການພັດທະນາ, ການຕິດຕາມກວດກາ, ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ ແລະ ການດໍາເນີນງານ ກ່ຽວກັບວຽກງານນ້ຳປະປາ.

# ໝວດທີ 2
# ມາດຕະຖານລະບົບໂຄງລ່າງນ້ຳປະປາ

## ມາດຕາ 15. ມາດຕະຖານ ການກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຄງລ່າງນ້ຳປະປາ

ການກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຄງລ່າງນ້ຳປະປາ ຕ້ອງໃຫ້ໄດ້ຕາມມາດຕະຖານເຕັກນິກ ດ້ານວິສະວະກໍາກໍ່ສ້າງ ຊຶ່ງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ ໂດຍສອດຄ່ອງກັບລະບຽບກົດໝາຍ ກ່ຽວກັບສິ່ງແວດລ້ອມ.

ທຸກການກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຄງລ່າງນ້ຳປະປາ ຕ້ອງໄດ້ຮັບການກວດກາ ແລະ ຢັ້ງຢືນ ດ້ານຄຸນນະພາບຈາກວິສະວະກອນທີ່ປຶກສາ ໂດຍມີການຮັບຮອງຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

## ມາດຕາ 16. ມາດຕະຖານ ອຸປະກອນນ້ຳປະປາ

ອຸປະກອນນ້ຳປະປາທີ່ນໍາໃຊ້ເຂົ້າໃນການກໍ່ສ້າງ ແລະ ຕິດຕັ້ງລະບົບໂຄງລ່າງນ້ຳປະປາ ຕ້ອງຮັບປະກັນຄຸນນະພາບ, ຄວາມປອດໄພດ້ານສຸຂະພາບ, ຄວາມທົນທານ ແລະ ໃຫ້ແທດເໝາະກັບສະພາບຕົວຈິງ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດມາດຕະຖານອຸປະກອນນ້ຳປະປາ, ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຜູ້ກວດກາຄຸນນະພາບອຸປະກອນນ້ຳປະປາ ທີ່ຜະລິດຢູ່ພາຍໃນປະເທດ ແລະ ນຳເຂົ້າຈາກຕ່າງປະເທດ ເພື່ອການກໍ່ສ້າງ ແລະ ຕິດຕັ້ງ ລະບົບໄຕງລ່າງນ້ຳປະປາ.

**ມາດຕາ 17. ມາດຕະຖານ ຄຸນນະພາບນ້ຳປະປາ**

ນ້ຳປະປາ ຕ້ອງຮັບປະກັນຄວາມສະອາດ ແລະ ຄວາມປອດໄພດ້ານສຸຂະພາບ ຕາມມາດຕະຖານຄຸນນະພາບນ້ຳປະປາ ຕາມລະບຽບການ ທີ່ກະຊວງສາທາລະນະສຸກ ວາງອອກ.

## ໝວດທີ 3
## ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ

**ມາດຕາ 18. ແຫຼ່ງນ້ຳ ສຳລັບການຜະລິດນ້ຳປະປາ**

ແຫຼ່ງນ້ຳ ສຳລັບການຜະລິດນ້ຳປະປາ ແມ່ນ ແຫຼ່ງນ້ຳໜ້າດິນ, ໃຕ້ດິນ, ນ້ຳອອກບໍ່ ແລະ ແຫຼ່ງນ້ຳອື່ນ ທີ່ໄດ້ຜ່ານການສຳຫຼວດ, ການເກັບກຳຂໍ້ມູນ ຂອງຂະແໜງການທີ່ກ່ຽວຂ້ອງ ຊຶ່ງເປັນພື້ນຖານ ຫຼື ບ່ອນອີງໃຫ້ແກ່ການລົງທຶນກໍ່ສ້າງ, ການດຳເນີນງານ ແລະ ການບູລະນະຮັກສາລະບົບໄຕງລ່າງນ້ຳປະປາ ໃຫ້ມີປະສິດທິຜົນ ແລະ ຍືນຍົງ.

ບຸກຄົນ ຫຼື ການຈັດຕັ້ງ ຈະມີສິດຄອບຄອງ ແລະ ນຳໃຊ້ແຫຼ່ງນ້ຳ ເພື່ອຜະລິດນ້ຳປະປາໄດ້ ກໍຕໍ່ເມື່ອໄດ້ຮັບການອະນຸຍາດຈາກ ຂະແໜງການທີ່ກ່ຽວຂ້ອງ ດ້ວຍການເຫັນດີ ຂອງຂະແໜງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຂັ້ນດຽວກັນ.

**ມາດຕາ 19. ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ**

ໃນການດຳເນີນທຸລະກິດນ້ຳປະປານັ້ນ ຜູ້ສຳປະທານ, ຜູ້ບໍລິການ ຕ້ອງນຳໃຊ້ແຫຼ່ງນ້ຳຢ່າງສົມເຫດສົມຜົນ ແລະ ມີມາດຕະການຫຼີກເວັ້ນ ຫຼື ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຢູ່ໃນຂອບເຂດບໍລິເວນທີ່ຕົນໄດ້ຮັບສຳປະທານ ຫຼື ດຳເນີນທຸລະກິດ.

ຜູ້ປະກອບການ, ບຸກຄົນ ແລະ ການຈັດຕັ້ງອື່ນ ຕ້ອງປະກອບສ່ວນ ປົກປັກຮັກສາສິ່ງແວດລ້ອມ, ບໍ່ໃຫ້ນ້ຳເປິເປື້ອນ, ເໜົ່າເໝັນ ແລະ ກໍ່ຜົນເສຍຫາຍ ໃຫ້ແກ່ແຫຼ່ງນ້ຳ.

## ໝວດທີ 4
## ການບູລະນະຮັກສາ ແລະ ການພັດທະນາ ລະບົບໄຕງລ່າງນ້ຳປະປາ

**ມາດຕາ 20. ການບູລະນະຮັກສາ ລະບົບໄຕງລ່າງນ້ຳປະປາ**

ຜູ້ສຳປະທານ, ຜູ້ບໍລິການ ຕ້ອງບູລະນະຮັກສາລະບົບໄຕງລ່າງນ້ຳປະປາ ລວມທັງ ສິ່ງອຳນວຍຄວາມສະດວກຕ່າງໆ ຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ

ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອບໍ່ໃຫ້ເຊື່ອມໂຊມ, ເປ່ເພ ແລະ ແຕກຫັກ ແນໃສ່ຮັບປະກັນໃຫ້ການດຳເນີນງານເປັນປົກກະຕິ ແລະ ສາມາດຕອບສະໜອງນ້ຳປະປາທີ່ມີຄຸນນະພາບ ໄດ້ຢ່າງພຽງພໍ.

## ມາດຕາ 21. ການພັດທະນາລະບົບໂຄງລ່າງນ້ຳປະປາ

ຜູ້ສຳປະທານ, ຜູ້ບໍລິການ ຕ້ອງເອົາໃຈໃສ່ປັບປຸງ, ພັດທະນາ ລະບົບໂຄງລ່າງນ້ຳປະປາ ດ້ວຍການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝ ເພື່ອໃຫ້ວຽກງານນ້ຳປະປາ ມີປະສິດທິຜົນ, ສາມາດຂະຫຍາຍຕາຂ່າຍນ້ຳປະປາ ໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ຊົມໃຊ້ຢ່າງກວ້າງຂວາງ ແລະ ຮັບປະກັນຄວາມຍືນຍົງ ຂອງລະບົບໂຄງລ່າງນ້ຳປະປາ.

## ມາດຕາ 22. ກອງທຶນພັດທະນາລະບົບໂຄງລ່າງນ້ຳປະປາ

ເພື່ອຮັບປະກັນໃຫ້ວຽກງານບູລະນະຮັກສາ, ປັບປຸງ ແລະ ພັດທະນາ ລະບົບໂຄງລ່າງນ້ຳປະປາ ເປັນຕົ້ນ ຢູ່ໃນເຂດຈຸດສຸມພັດທະນາ ແລະ ຊົນນະບົດ ດຳເນີນໄປຢ່າງມີປະສິດທິຜົນ ແລະ ຍືນຍົງນັ້ນ ລັດ ອະນຸຍາດໃຫ້ສ້າງຕັ້ງກອງທຶນພັດທະນາລະບົບໂຄງລ່າງນ້ຳປະປາ.

ແຫຼ່ງກອງທຶນພັດທະນາລະບົບໂຄງລ່າງນ້ຳປະປາ ໄດ້ມາຈາກ ງົບປະມານຂອງລັດ, ການຊ່ວຍເຫຼືອ, ການປະກອບສ່ວນຂອງບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ລວມທັງ ຜູ້ບໍລິການ.

ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນດັ່ງກ່າວ ໃຫ້ປະຕິບັດຕາມລະບຽບກົດໝາຍກ່ຽວກັບງົບປະມານແຫ່ງລັດ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

# ພາກທີ III
# ການດຳເນີນທຸລະກິດນ້ຳປະປາ

## ໝວດທີ 1
## ທຸລະກິດນ້ຳປະປາ

## ມາດຕາ 23. ປະເພດ ການລົງທຶນ

ການລົງທຶນດຳເນີນທຸລະກິດນ້ຳປະປາ ມີ ສາມ ປະເພດ ດັ່ງນີ້:

1. ການລົງທຶນຂອງລັດ;
2. ການລົງທຶນແບບປະສົມ ລະຫວ່າງລັດ ກັບ ເອກະຊົນ ພາຍໃນ, ຕ່າງປະເທດ;
3. ການລົງທຶນ ຂອງເອກະຊົນ ພາຍໃນ, ຕ່າງປະເທດ.

## ມາດຕາ 24. ການສ້າງຕັ້ງ ວິສາຫະກິດ

ບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດນໍ້າປະປາ ຕ້ອງຂໍອະນຸຍາດດໍາເນີນທຸລະກິດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

ບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດນໍ້າປະປາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີປະສົບການ ຫຼື ມີນັກວິຊາການ ກ່ຽວກັບ ການດໍາເນີນທຸລະກິດ;
2. ມີນັກວິຊາການທີ່ມີຄວາມສາມາດ ທາງດ້ານເຕັກນິກນໍ້າປະປາ ແລະ ນັກວິຊາການອື່ນທີ່ກ່ຽວຂ້ອງ ໃນຈໍານວນທີ່ເໝາະສົມກັບ ຂະໜາດຂອງກິດຈະການ ເຊັ່ນ: ນັກວິໄຈນໍ້າ, ນັກວິຊາການໄຟຟ້າ, ນັກວິຊາການຄຸ້ມຄອງ, ນັກວິຊາການບັນຊີ ແລະ ອື່ນໆ;
3. ມີທຶນ, ພາຫະນະ, ກົນຈັກ ແລະ ອຸປະກອນ ພຽງພໍ ແລະ ເໝາະສົມ ເພື່ອກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຄງລ່າງນໍ້າປະປາ ແລະ ໃຫ້ການບໍລິການ ໃນພື້ນທີ່ບໍລິການຂອງຕົນ;
4. ມີພື້ນທີ່ບໍລິການ ທີ່ໄດ້ຮັບການເຫັນດີ ແລະ ຮັບຮອງເອົາ ຢ່າງເປັນທາງການຈາກອົງການຄຸ້ມຄອງວຽກງານນໍ້າປະປາ;
5. ມີແຫຼ່ງນໍ້າທີ່ໄດ້ຮັບການເຫັນດີ ຈາກອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ.

## ມາດຕາ 25. ການລົງທຶນໃສ່ທຸລະກິດນໍ້າປະປາ

ການລົງທຶນໃສ່ທຸລະກິດນໍ້າປະປາ ແມ່ນ ການລົງທຶນ ກໍ່ສ້າງ, ບູລະນະຮັກສາ, ປັບປຸງ ແລະ ພັດທະນາ ລະບົບໂຄງລ່າງນໍ້າປະປາ ເພື່ອສະໜອງນໍ້າປະປາ ໃຫ້ແກ່ປະຊາຊົນ ທັງຢູ່ໃນຕົວເມືອງ, ເຂດຈຸດສຸມພັດທະນາ ແລະ ຊົນນະບົດ ໄດ້ຊົມໃຊ້ຢ່າງກວ້າງຂວາງ.

ການລົງທຶນ ສາມາດດໍາເນີນດ້ວຍ:

- ການກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ;
- ການກໍ່ສ້າງ, ດໍາເນີນງານ, ເປັນເຈົ້າຂອງ ແລະ ມອບໂອນ;
- ການກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ;
- ຮູບແບບອື່ນ.

## ມາດຕາ 26. ການເຫັນດີດ້ານເຕັກນິກ ກ່ຽວກັບ ການກໍ່ສ້າງລະບົບໂຄງລ່າງນໍ້າປະປາ

ການເຫັນດີດ້ານເຕັກນິກ ກ່ຽວກັບ ການກໍ່ສ້າງລະບົບໂຄງລ່າງນໍ້າປະປາ ຢູ່ ສປປ ລາວ ແບ່ງອອກເປັນ ສອງ ລະດັບ ດັ່ງນີ້:

1. ໂຄງລ່າງນໍ້າປະປາ ທີ່ໃຫ້ການບໍລິການ ແຕ່ 20.000 ຄົນລົງມາ ຕ້ອງໄດ້ຮັບການເຫັນດີດ້ານເຕັກນິກ ຈາກ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ;
2. ໂຄງລ່າງນໍ້າປະປາ ທີ່ໃຫ້ການບໍລິການ ເກີນກວ່າ 20.000 ຄົນ ຕ້ອງໄດ້ຮັບການເຫັນດີດ້ານເຕັກນິກ ຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 27. ການສຳປະທານ**

ນິຕິບຸກຄົນ ທີ່ມີຈຸດປະສົງ ຂໍສຳປະທານທຸລະກິດນ້ຳປະປາ ຕ້ອງຍື່ນຄຳຮ້ອງຕໍ່ຂະແໜງການແຜນການ ແລະ ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

**ມາດຕາ 28. ເງື່ອນໄຂຂອງຜູ້ຂໍສຳປະທານ**

ຜູ້ຂໍສຳປະທານ ທຸລະກິດນ້ຳປະປາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີປະຫວັດການດຳເນີນທຸລະກິດທີ່ດີ ແລະ ໜ້າເຊື່ອຖືໄດ້;
2. ມີຄວາມສາມາດທາງດ້ານການເງິນ ແລະ ດ້ານເຕັກນິກ.

**ມາດຕາ 29. ສິດ ຂອງຜູ້ສຳປະທານ**

ຜູ້ສຳປະທານທຸລະກິດນ້ຳປະປາ ມີສິດຕົ້ນຕໍ ດັ່ງນີ້:

1. ນຳໃຊ້ເນື້ອທີ່ດິນ ໃນການກໍ່ສ້າງລະບົບໂຄງລ່າງນ້ຳປະປາ;
2. ດຳເນີນທຸລະກິດນ້ຳປະປາ ຕາມຂອບເຂດທີ່ຕົນໄດ້ຮັບສຳປະທານ;
3. ເປັນເຈົ້າກຳມະສິດ ຂອງລະບົບໂຄງລ່າງນ້ຳປະປາ ທີ່ຕົນໄດ້ກໍ່ສ້າງຂຶ້ນ ຕາມກຳນົດເວລາສຳປະທານ;
4. ໄດ້ຮັບຜົນປະໂຫຍດຈາກການສຳປະທານ;
5. ໄດ້ຮັບການປົກປ້ອງ ຕາມກົດໝາຍ ເປັນຕົ້ນ ໄດ້ຮັບການທົດແທນຄວາມເສຍຫາຍ ເນື່ອງຈາກການຮື້ຖອນໂດຍໂຄງການກໍ່ສ້າງກິດຈະການອື່ນ ທີ່ບໍ່ກ່ຽວຂ້ອງກັບລະບົບໂຄງລ່າງນ້ຳປະປາ;
6. ໄດ້ຮັບການແນະນຳທາງດ້ານວິຊາການ, ເຕັກໂນໂລຊີ ແລະ ອື່ນໆ ກ່ຽວກັບວຽກງານນ້ຳປະປາ;
7. ສະເໜີຂໍຕໍ່ອາຍຸສຳປະທານ;
8. ໃຫ້ເຊົ່າ, ໂອນ ທຸລະກິດນ້ຳປະປາ ໃນຂອບເຂດອາຍຸສຳປະທານທີ່ຍັງເຫຼືອ ໃຫ້ແກ່ຜູ້ອື່ນ ຕາມລະບຽບກົດໝາຍ.

**ມາດຕາ 30. ພັນທະ ຂອງຜູ້ສຳປະທານ**

ຜູ້ສຳປະທານທຸລະກິດນ້ຳປະປາ ມີພັນທະຕົ້ນຕໍ ດັ່ງນີ້:

1. ດຳເນີນທຸລະກິດນ້ຳປະປາ ໃຫ້ຖືກຕ້ອງຕາມສັນຍາສຳປະທານ, ບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບຕໍ່ ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;
2. ມີທຶນຈົດທະບຽນ ຊຶ່ງຕ້ອງປະຕິບັດຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ;
3. ເສຍພາສີອາກອນ, ພັນທະອື່ນໃຫ້ລັດ ແລະ ຊຳລະໜີ້ສິນຂອງຕົນໃຫ້ຄົບຖ້ວນ ແລະ ທັນເວລາ;

4. ປົກປັກຮັກສາແຫຼ່ງນໍ້າ ແລະ ສິ່ງແວດລ້ອມ, ໃຊ້ແທນຄ່າເສຍຫາຍ ໃນກໍລະນີທີ່ໄດ້ກໍ່ຄວາມເສຍຫາຍ ແກ່ຊີວິດ, ສຸຂະພາບ ຫຼື ຊັບສິນຂອງປະຊາຊົນ;
5. ຝຶກອົບຮົມ, ກໍ່ສ້າງດ້ານວິຊາການ ແລະ ຮັບປະກັນດ້ານສະຫວັດດີການຕໍ່ພະນັກງານ, ນັກວິຊາການ ແລະ ຜູ້ອອກແຮງງານ;
6. ບູລະນະຮັກສາ, ສ້ອມແປງເຄື່ອງຈັກ ແລະ ອຸປະກອນນໍ້າປະປາ ລວມທັງໂຄງລ່າງນໍ້າປະປາ ໃຫ້ຢູ່ໃນສະພາບດີ ຕາມກໍານົດເວລາ ແລະ ຕາມຫຼັກການເຕັກນິກ;
7. ສ້ອມແປງພາຫະນະ, ເຄື່ອງຈັກໃຫ້ຢູ່ໃນສະພາບທີ່ໃຊ້ງານໄດ້ ກ່ອນການໂອນທຸລະກິດນໍ້າປະປາ ໃຫ້ລັດ;
8. ມອບໂຄງການ ພ້ອມດ້ວຍບົດວິພາກເສດຖະກິດ-ເຕັກນິກ ແລະ ເອກະສານອື່ນຂອງໂຄງການໃຫ້ແກ່ລັດ ໂດຍບໍ່ມີການທົດແທນ ເມື່ອໝົດອາຍຸສໍາປະທານ ຫຼື ໃນກໍລະນີ ທີ່ຜູ້ສໍາປະທານ ຫາກບໍ່ສືບຕໍ່ດໍາເນີນທຸລະກິດນໍ້າປະປາ;
9. ປະສານສົມທົບ ແລະ ຮ່ວມມີປະກອບສ່ວນ ໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ທີ່ໂຄງການຕັ້ງຢູ່.

### ມາດຕາ 31. ກໍານົດເວລາສໍາປະທານ

ກໍານົດເວລາສໍາປະທານ ສູງສຸດບໍ່ໃຫ້ເກີນ ສາມສິບປີ ນັບແຕ່ວັນໄດ້ຮັບອະນຸຍາດສໍາປະທານເປັນຕົ້ນໄປ. ພາຍຫຼັງ ກໍານົດເວລາສໍາປະທານສິ້ນສຸດແລ້ວ ຜູ້ສໍາປະທານ ຕ້ອງໂອນທຸລະກິດຂອງຕົນທັງໝົດໃຫ້ລັດ ໃນສະພາບທີ່ໃຊ້ງານໄດ້ ແລະ ບໍ່ມີການທົດແທນມູນຄ່າຄືນແຕ່ຢ່າງໃດ ເວັ້ນເສຍແຕ່ ໃນກໍລະນີການລົງທຶນ ຕາມຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ.

ການສໍາປະທານ ສາມາດຕໍ່ອາຍຸໄດ້ ແຕ່ບໍ່ໃຫ້ເກີນ ສິບປີ ຕາມການຕົກລົງ ຂອງອົງການທີ່ມີສິດກ່ຽວຂ້ອງ ແຕ່ການຂໍຕໍ່ອາຍຸນັ້ນ ຕ້ອງສະເໜີ ຫ້າປີ ກ່ອນອາຍຸສໍາປະທານຈະສິ້ນສຸດລົງ.

### ມາດຕາ 32. ການສິ້ນສຸດການສໍາປະທານ

ການສໍາປະທານ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ໝົດອາຍຸສໍາປະທານ;
2. ຢຸດເຊົາການສໍາປະທານກ່ອນກໍານົດເວລາ ຕາມການສະເໜີ ຂອງຜູ້ສໍາປະທານ ແລະ ການເຫັນດີ ຂອງລັດ;
3. ຖືກຖອນສິດສໍາປະທານ ຍ້ອນມີການລະເມີດລະບຽບກົດໝາຍຢ່າງຮ້າຍແຮງ, ບໍ່ປະຕິບັດພັນທະຕາມສັນຍາ ຫຼື ຕາມລະບຽບກົດໝາຍ;
4. ບໍ່ສາມາດສ້ອມແປງ ຫຼື ຟື້ນຟູ ໂຄງການສໍາປະທານ ທີ່ໄດ້ຮັບຄວາມເສຍຫາຍ;
5. ມີການຍົກເລີກສັນຍາສໍາປະທານ.

ກ່ອນການສິ້ນສຸດການສໍາປະທານ ຕ້ອງມີການສະຫຼຸບ, ປະເມີນຜົນ ຂອງການປະຕິບັດໂຄງການສໍາປະທານ.

## ໝວດທີ 2
## ການສົ່ງເສີມການລົງທຶນ

### ມາດຕາ 33. ນະໂຍບາຍ ດ້ານອາກອນກຳໄລ

ການລົງທຶນໃສ່ທຸລະກິດນ້ຳປະປາ ໃຫ້ຈັດເຂົ້າໃນກິດຈະການສົ່ງເສີມລະດັບ 1 ແລະ ໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

### ມາດຕາ 34. ນະໂຍບາຍ ດ້ານພາສີ, ອາກອນອື່ນ

ຜູ້ລົງທຶນ ນອກຈາກໄດ້ຮັບນະໂຍບາຍດ້ານອາກອນກຳໄລແລ້ວ ຍັງຈະໄດ້ຮັບນະໂຍບາຍດ້ານພາສີ, ອາກອນອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

### ມາດຕາ 35. ນະໂຍບາຍ ການເຂົ້າເຖິງແຫຼ່ງທຶນ

ຜູ້ລົງທຶນ ພາຍໃນ ແລະຕ່າງປະເທດ ທີ່ດຳເນີນທຸລະກິດນ້ຳປະປາ ສາມາດເຂົ້າເຖິງແຫຼ່ງທຶນ ດ້ວຍ ການກູ້ຢືມເງິນນຳ ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ຢູ່ ສປປ ລາວ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ.

### ມາດຕາ 36. ນະໂຍບາຍ ສົ່ງເສີມສະເພາະ

ການລົງທຶນ ໃສ່ທຸລະກິດນ້ຳປະປາ ຈະໄດ້ຮັບນະໂຍບາຍ ຍົກເວັ້ນການເກັບຄ່າ ເຊົ່າ ຫຼື ສຳປະທານ ທີ່ດິນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

## ໝວດທີ 3
## ການດັດສົມທຸລະກິດ ແລະ ການກຳນົດລາຄານ້ຳປະປາ

### ມາດຕາ 37. ຈຸດປະສົງ ຂອງການດັດສົມທຸລະກິດນ້ຳປະປາ

ການດັດສົມທຸລະກິດນ້ຳປະປາ ມີຈຸດປະສົງສ້າງສະພາບແວດລ້ອມທີ່ຊຸກຍູ້ສົ່ງເສີມ ແລະ ເອື້ອອຳນວຍ ໃຫ້ແກ່ຜູ້ດຳເນີນທຸລະກິດນ້ຳປະປາ ສາມາດເຄື່ອນໄຫວທຸລະກິດ ຢ່າງມີປະສິດທິຜົນສູງ ພ້ອມທັງ ຮັບປະກັນໃຫ້ຜູ້ໃຊ້ບໍລິການ ໄດ້ຮັບການບໍລິການຢ່າງພຽງພໍ, ມີຄຸນນະພາບ, ໃນລາຄາທີ່ສົມເຫດສົມຜົນ ແລະ ທຸກຄົນ ສາມາດຈ່າຍໄດ້.

### ມາດຕາ 38. ການຄຸ້ມຄອງ

ການຕິດສິນທຸລະກິດນ້ຳປະປາ ມີ ສອງ ດ້ານ:

- ການຕິດສິນທາງດ້ານເຕັກນິກ ແມ່ນ ການໃຫ້ຜູ້ດຳເນີນທຸລະກິດປະຕິບັດຕາມ ກົດໝາຍ, ມາດຕະຖານເຕັກນິກ ແລະ ຕົວຊີ້ບອກຜົນການດຳເນີນງານ ເພື່ອຮັບປະກັນໃຫ້ການຜະລິດ ແລະ ການບໍລິການນ້ຳປະປາ ແກ່ຜູ້ໃຊ້ບໍລິການໄດ້ຊົມໃຊ້ນ້ຳທີ່ມີຄຸນນະພາບ, ສະອາດ, ປອດໄພ ແລະ ພຽງພໍ;
- ການຕິດສິນທາງດ້ານເສດຖະກິດ ແມ່ນ ການໃຫ້ຜູ້ດຳເນີນທຸລະກິດຕ້ອງປະຕິບັດຕາມ ກົດໝາຍທາງດ້ານການບໍລິການ ແລະ ທາງດ້ານລາຄາ ແນໃສ່ໃຫ້ຜູ້ລົງທຶນສາມາດດຳເນີນທຸລະກິດ ຢ່າງຕໍ່ເນື່ອງ, ມີປະສິດທິຜົນ ແລະ ຍືນຍົງ, ພ້ອມກັນນັ້ນກໍຮັບປະກັນໃຫ້ຜູ້ໃຊ້ບໍລິການໄດ້ຊົມໃຊ້ນ້ຳປະປາ ໃນລາຄາທີ່ສົມເຫດສົມຜົນ, ທຸກຄົນສາມາດຈ່າຍໄດ້ ແລະ ຕ້ອງຈ່າຍຄ່ານ້ຳປະປາ ຕາມບໍລິມາດທີ່ໄດ້ຊົມໃຊ້ ຕາມກຳນົດເວລາ.

ລັດຖະບານ ເປັນຜູ້ກຳນົດລະບົບການຕິດສິນທຸລະກິດນ້ຳປະປາ ໃຫ້ເໝາະສົມ ກັບສະພາບເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ຕາມການສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

ລະບົບການຕິດສິນທຸລະກິດນ້ຳປະປາ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 39. ນະໂຍບາຍລາຄານ້ຳປະປາ

ລັດຖະບານ ເປັນຜູ້ຮັບຮອງເອົານະໂຍບາຍລາຄານ້ຳປະປາ ໃນແຕ່ລະເຂດ, ແຕ່ລະທ້ອງຖິ່ນ, ແຕ່ລະເປົ້າໝາຍການຊົມໃຊ້ ແລະ ປະເພດຜູ້ຊົມໃຊ້ ໃນແຕ່ລະໄລຍະ ຕາມການສະເໜີຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

### ມາດຕາ 40. ການກຳນົດລາຄານ້ຳປະປາ

ການກຳນົດລາຄານ້ຳປະປາ ຕ້ອງຮັບປະກັນ ຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງຊາດໃນແຕ່ລະໄລຍະ.

ລາຄານ້ຳປະປາ ຕ້ອງມີສະຖຽນລະພາບ ທັງຮັບປະກັນການປະຕິບັດນະໂຍບາຍ ຂອງລັດຕໍ່ເປົ້າໝາຍການຊົມໃຊ້ ແລະ ປະເພດຜູ້ຊົມໃຊ້ ແລະ ໃຫ້ຜົນຕອບແທນຕໍ່ການລົງທຶນ ຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຕິດສິນຂອງລັດ.

ລາຄານ້ຳປະປາ ກຳນົດຕາມໂຄງປະກອບຕົ້ນທຶນ ຄື: ລາຍຈ່າຍຄ່າພະລັງງານ, ສານເຄມີ, ຄ່າຫຼຸ້ຍຫ້ຽນ, ຄ່າຄຸ້ມຄອງບໍລິຫານ, ດອກເບ້ຍ, ຕົ້ນທຶນເງິນກູ້, ກຳໄລຕາມກຳນົດໝາຍ, ອາກອນທຸລະກິດ, ເປົ້າໝາຍການຊົມໃຊ້, ລາຍຮັບຂອງຜູ້ຊົມໃຊ້ ແລະ ບັນຫາອື່ນທີ່ກ່ຽວຂ້ອງ.

ກະຊວງໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຶກສາ ແລະ ຄົ້ນຄວ້າ ໂຄງປະກອບລາຄານ້ຳປະປາ ໃນແຕ່ລະເປົ້າໝາຍການຊົມໃຊ້ ແລະ ປະເພດຜູ້ຊົມໃຊ້ ເພື່ອນຳສະເໜີລັດຖະບານພິຈາລະນາ.

### ມາດຕາ 41. ການຄົ້ນຄວ້າປັບປຸງລາຄານ້ຳປະປາ

ເພື່ອໃຫ້ລາຄານ້ຳປະປາສົມເຫດສົມຜົນ ໃນແຕ່ລະໄລຍະ ຂອງການພັດທະນາເສດຖະກິດ-ສັງຄົມນັ້ນ ຂະແໜງການໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າການປັບປຸງລາຄານ້ຳປະປາ ທີ່ຜູ້ດຳເນີນທຸລະກິດ ສະເໜີໃນແຕ່ລະໄລຍະ ແລ້ວສົ່ງບົດຄົ້ນຄວ້າການປັບປຸງລາຄານັ້ນ ນຳສະເໜີຕໍ່ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອພິຈາລະນາ ທາງດ້ານວິຊາການ ແນໃສ່ໃຫ້ຜູ້ຊົມໃຊ້ ໂດຍສະເພາະປະຊາຊົນຜູ້ທຸກຍາກ ມີຄວາມສາມາດຈ່າຍໄດ້ ແລະ ຜູ້ດຳເນີນທຸລະກິດນ້ຳປະປາ ກໍສາມາດເຄື່ອນໄຫວທຸລະກິດຂອງຕົນໄດ້ ຢ່າງມີປະສິດທິຜົນ.

ສຳລັບລາຄານ້ຳປະປາຢູ່ຊົນນະບົດນັ້ນ ແມ່ນ ອີງຕາມການສະເໜີຂອງຜູ້ລົງທຶນ ບົນພື້ນຖານການເຫັນດີ ຂອງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ໃນກໍລະນີ ທີ່ຜູ້ລົງທຶນຫາກຂາດທຶນໂດຍມີເຫດຜົນ ລັດ ຈະຊົດເຊີຍຕາມຄວາມເໝາະສົມ.

### ມາດຕາ 42. ການອະນຸມັດລາຄານ້ຳປະປາ

ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ອອກຂໍ້ຕົກລົງອະນຸມັດລາຄານ້ຳປະປາ ໃນແຕ່ລະໄລຍະ ບົນພື້ນຖານການສະເໜີ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ພາຍຫຼັງ ທີ່ໄດ້ຜ່ານຄຳເຫັນ ຂອງການຈັດຕັ້ງ ທີ່ຮັບຜິດຊອບການດັດສົມ ຕາມນະໂຍບາຍ ແລະ ໂຄງປະກອບລາຄາ ທີ່ລັດຖະບານ ໄດ້ຮັບຮອງເອົາ.

ອົງການຄຸ້ມຄອງວຽກງານນ້ຳປະປາແຕ່ລະຂັ້ນ ຕ້ອງເຜີຍແຜ່ຂໍ້ຕົກລົງດັ່ງກ່າວ ລວມທັງການຄິດໄລ່ລາຄານ້ຳປະປາໃຫ້ ຜູ້ບໍລິການ, ຜູ້ໃຊ້ບໍລິການນ້ຳປະປາ ແລະ ສາທາລະນະຊົນ ທົ່ວໄປ ຮັບຊາບ ແລະ ປະຕິບັດ.

## ໝວດທີ 4
## ສິດ ແລະ ພັນທະ ຂອງຜູ້ບໍລິການ, ຜູ້ໃຊ້ບໍລິການ, ເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ

### ມາດຕາ 43. ສິດ ຂອງຜູ້ບໍລິການ

ຜູ້ບໍລິການນ້ຳປະປາ ມີສິດຕົ້ນຕໍ ດັ່ງນີ້:

1. ໄດ້ຮັບອະນຸຍາດໃຫ້ເຂົ້າໃນຂອບເຂດທີ່ພັກອາໄສ, ສຳນັກງານ ອົງການຂອງລັດ, ເອກະຊົນ ແລະ ສະຖານທີ່ຕ່າງໆ ເພື່ອກໍ່ສ້າງ, ບູລະນະຮັກສາ, ສ້ອມແປງ ແລະ ປ່ຽນຖ່າຍອຸປະກອນນ້ຳປະປາ, ທໍ່ນ້ຳ, ໝໍ້ແທກນ້ຳ ແລະ ຈົດບໍລິມາດການນຳໃຊ້ນ້ຳ;
2. ເກັບຄ່ານ້ຳປະປາ ໃຫ້ຖືກຕ້ອງຕາມບໍລິມາດນ້ຳທີ່ໄດ້ຊົມໃຊ້ ແລະ ຕາມລະບຽບການ;

3. ຕັກເຕືອນຜູ້ໃຊ້ບໍລິການ ທີ່ລະເມີດລະບຽບການບໍລິການນ້ຳປະປາ, ໂຈະການສະໜອງນ້ຳປະປາ ເມື່ອມີການລະເມີດຢ່າງຮ້າຍແຮງ ເຊັ່ນ:
   - ບໍ່ຊຳລະຄ່າບໍລິການຕາມປົກກະຕິ ພາຍຫຼັງທີ່ໄດ້ມີການຕັກເຕືອນແລ້ວ ສາມຄັ້ງ;
   - ດັດແປງໝໍ້ແທກນ້ຳ ເພື່ອເຮັດໃຫ້ຕົວເລກບໍລິມາດນ້ຳ ທີ່ໄດ້ຊົມໃຊ້ ຫຼຸດລົງກວ່າບໍລິມາດນ້ຳທີ່ໄດ້ຊົມໃຊ້ຕົວຈິງ;
4. ປະກອບຄຳຄິດຄຳເຫັນຕໍ່ແຜນພັດທະນາ ວຽກງານນ້ຳປະປາ ໃນພື້ນທີ່ບໍລິການຂອງຕົນ;
5. ໄດ້ຮັບການທົດແທນ ຕາມລະບຽບກົດໝາຍ ຕໍ່ຄວາມເສຍຫາຍຕ່າງໆ ຂອງລະບົບໂຄງລ່າງນ້ຳປະປາ ທີ່ບຸກຄົນ ຫຼື ການຈັດຕັ້ງ ກໍ່ຂຶ້ນ.

## ມາດຕາ 44. ພັນທະ ຂອງຜູ້ບໍລິການ

ຜູ້ບໍລິການນ້ຳປະປາ ມີພັນທະຕົ້ນຕໍ ດັ່ງນີ້:

1. ສະໜອງ ການບໍລິການນ້ຳປະປາ ໃຫ້ແກ່ຜູ້ໃຊ້ບໍລິການ ຢ່າງເປັນປົກກະຕິ, ມີຄຸນນະພາບ, ສະອາດ, ປອດໄພ, ສະດວກ, ຕາມກຳນົດເວລາ, ຖືກຕ້ອງ ແລະ ທ່ຽງທຳ;
2. ແນະນຳ ລະບຽບຫຼັກການ ກ່ຽວກັບ ການນຳໃຊ້ນ້ຳປະປາ ໃຫ້ແກ່ຜູ້ໃຊ້ບໍລິການ;
3. ຮັບປະກັນ ຄວາມປອດໄພ ແລະ ສະຫວັດດີການຂອງພະນັກງານນ້ຳປະປາ;
4. ຖືບັນຊີຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການບັນຊີ, ລາຍງານຂໍ້ມູນ, ສະຖິຕິ ແລະ ຜົນການດຳເນີນທຸລະກິດຂອງຕົນ ໃຫ້ອົງການຄຸ້ມຄອງວຽກງານນ້ຳປະປາ ແລະ ຂະແໜງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
5. ປະຕິບັດພັນທະ, ເສຍພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ຕາມລະບຽບກົດໝາຍ;
6. ທົດແທນຄ່າເສຍຫາຍ ຕາມລະບຽບກົດໝາຍ ໃນກໍລະນີທີ່ກໍ່ຄວາມເສຍຫາຍຕໍ່ ຊີວິດ, ສຸຂະພາບ, ຊັບສິນ ຂອງປະຊາຊົນ, ຂອງສາທາລະນະ ແລະ ສິ່ງແວດລ້ອມ;
7. ຕິດຕາມ, ກວດກາ ແລະ ແກ້ໄຂບັນຫານ້ຳຮົ່ວໄຫຼຢູ່ຕາມສາຍທໍ່, ອາຄານ ແລະ ສະຖານທີ່ສາທາລະນະຕ່າງໆ ລວມທັງແກ້ໄຂບັນຫາຕ່າງໆ ຕາມການສະເໜີຂອງຜູ້ໃຊ້ບໍລິການ ຢ່າງສົມເຫດສົມຜົນ;
8. ປັບປຸງ, ຍົກລະດັບ ທາງດ້ານເຕັກໂນໂລຊີ ໃນການຜະລິດ ນ້ຳປະປາ ໃຫ້ທັນສະໄໝຂຶ້ນໄປເລື້ອຍໆ;
9. ແຈ້ງການ ໂຈະການສະໜອງນ້ຳປະປາ ເພື່ອການກໍ່ສ້າງ ແລະ ສ້ອມແປງ;
10. ກໍ່ສ້າງ ແລະ ຕິດຕັ້ງ ລະບົບສຸຂາພິບານ ໂດຍນຳໃຊ້ເຕັກໂນໂລຊີທີ່ເໝາະສົມ.

## ມາດຕາ 45. ສິດ ຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີສິດຕົ້ນຕໍ ດັ່ງນີ້:

1. ໄດ້ຮັບການບໍລິການນ້ຳປະປາ ຢ່າງພຽງພໍ, ມີຄຸນນະພາບ, ປອດໄພ, ສະອາດ, ສະດວກ, ວ່ອງໄວ, ຖືກຕ້ອງ ແລະ ຍຸຕິທຳ;

2. ສະເໜີຕໍ່ ຜູ້ບໍລິການນ້ຳປະປາ ກວດກາ ແລະ ແກ້ໄຂ ຄວາມຜິດພາດ ດ້ານເຕັກນິກ ແລະ ຄ່າບໍລິການນ້ຳປະປາ ທີ່ຕົນເຫັນວ່າ ບໍ່ຖືກຕ້ອງ ຫຼື ບໍ່ຊັດເຈນ;
3. ສະເໜີຕໍ່ອົງການຄຸ້ມຄອງວຽກງານນ້ຳປະປາ ໃນກໍລະນີທີ່ໄດ້ຮັບການບໍລິການ ບໍ່ພຽງພໍ, ບໍ່ມີຄຸນນະພາບ, ບໍ່ປອດໄພ, ບໍ່ສະອາດ, ບໍ່ສະດວກ, ບໍ່ວ່ອງໄວ, ບໍ່ຖືກຕ້ອງ ແລະ ບໍ່ຍຸຕິທຳ;
4. ໄດ້ຮັບຂໍ້ມູນກ່ຽວກັບກິດຈະການນ້ຳປະປາ;
5. ໄດ້ຮັບການທົດແທນຄ່າເສຍຫາຍ ທີ່ເກີດຈາກການບໍລິການນ້ຳປະປາ ຕາມລະບຽບກົດໝາຍ.

### ມາດຕາ 46. ພັນທະ ຂອງຜູ້ໃຊ້ບໍລິການ

ຜູ້ໃຊ້ບໍລິການ ມີພັນທະຕົ້ນຕໍ ດັ່ງນີ້:

1. ປະຕິບັດຕາມ ການແນະນຳທາງດ້ານເຕັກນິກ, ລະບຽບການນຳໃຊ້ ອຸປະກອນນ້ຳປະປາ ແລະ ລະບຽບການ ກ່ຽວກັບນ້ຳປະປາ;
2. ອຳນວຍຄວາມສະດວກ ໃຫ້ແກ່ຜູ້ບໍລິການໃນການ ກໍ່ສ້າງ, ຕິດຕັ້ງ, ສ້ອມແປງລະບົບໄຕ່ງລ່າງນ້ຳປະປາ, ກວດກາ ແລະ ຈົດບໍລິມາດນ້ຳປະປາທີ່ໄດ້ຊົມໃຊ້;
3. ຊຳລະຄ່ານ້ຳປະປາ ຢ່າງເປັນປົກກະຕິ, ຄົບຖ້ວນ ແລະ ຖືກຕ້ອງຕາມເວລາ;
4. ຊ່ວຍປົກປັກຮັກສາ ລະບົບໄຕ່ງລ່າງນ້ຳປະປາ ເຊັ່ນ: ອ່າງເກັບນ້ຳ, ທໍ່ສົ່ງ, ທໍ່ແຈກ, ໝໍ້ແທກນ້ຳ ແລະ ອຸປະກອນອື່ນ ກ່ຽວກັບນ້ຳປະປາ ໃຫ້ຢູ່ໃນສະພາບດີ, ເມື່ອມີການເປ່ເພ ຫຼື ນ້ຳຮົ່ວໄຫຼ ແລະ ມີສິ່ງຜິດປົກກະຕິເກີດຂຶ້ນ ຕ້ອງແຈ້ງໃຫ້ຜູ້ບໍລິການມາທຳການສ້ອມແປງ ຢ່າງທັນການ;
5. ບໍ່ສ້າງ ຄວາມເປິເປື້ອນ ແລະ ມົນລະພິດ ໃຫ້ແກ່ແຫຼ່ງນ້ຳ;
6. ທົດແທນຄ່າເສຍຫາຍ ທີ່ເກີດຈາກການກະທຳຂອງຕົນເອງ ໃຫ້ແກ່ຜູ້ບໍລິການ ແລະ ອົງການຈັດຕັ້ງ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ.

### ມາດຕາ 47. ສິດ ແລະ ພັນທະ ຂອງເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ

ເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ ມີສິດ ສູບເອົານ້ຳປະປາ ຈາກກ໊ອກດັບເພີງ ທີ່ໄດ້ຕິດຕັ້ງໄວ້ຢູ່ຕາມຈຸດຕ່າງໆ ຕະຫຼອດ ຊາວສີ່ ຊົ່ວໂມງ ແລະ ມີພັນທະ ລາຍງານ ໃຫ້ອົງການຄຸ້ມຄອງວຽກງານນ້ຳປະປາ ທີ່ກ່ຽວຂ້ອງ ແລະ ຜູ້ບໍລິການ ຢ່າງລະອຽດ ກ່ຽວກັບ ວັນ, ເວລາ ແລະ ບໍລິມາດນ້ຳປະປາ ທີ່ໄດ້ສູບເອົາໄປນຳໃຊ້ ເພື່ອມອດໄຟນັ້ນ.

# ພາກທີ IV
# ຂໍ້ຫ້າມ

## ມາດຕາ 48. ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ ຫຼື ການຈັດຕັ້ງ ມີການກະທຳຕົ້ນຕໍ ດັ່ງນີ້:

1. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມື ໂດຍບໍ່ມີເຫດຜົນພຽງພໍ ແກ່ກິດຈະການນ້ຳປະປາ ເປັນຕົ້ນ ການວາງທໍ່ນ້ຳປະປາ ຜ່ານທີ່ດິນຂອງຕົນ ຕາມໂຄງການທີ່ໄດ້ມີການຮັບຮອງ ຢ່າງຖືກຕ້ອງ ພາຍຫຼັງທີ່ເຈົ້າໜ້າທີ່ໄດ້ຊີ້ແຈງແລ້ວ;
2. ທຳລາຍ ຫຼື ສ້າງຄວາມເສຍຫາຍ ແກ່ລະບົບໂຄງລ່າງນ້ຳປະປາ ເຊັ່ນ: ອ່າງເກັບນ້ຳ, ທໍ່ສົ່ງ, ທໍ່ແຈກ, ໝໍ້ແທກນ້ຳ ແລະ ອຸປະກອນອື່ນ ກ່ຽວກັບ ນ້ຳປະປາ;
3. ບຸກລຸກແຫຼ່ງນ້ຳ ສຳລັບ ການຜະລິດນ້ຳປະປາ, ປ່ອຍສານພິດ, ສ້າງຄວາມເປິເປື້ອນ ໃຫ້ແກ່ແຫຼ່ງນ້ຳ ແລະ ນ້ຳປະປາ;
4. ລັກ ອຸປະກອນນ້ຳປະປາ, ຕໍ່ເອົານ້ຳຈາກ ທໍ່ສົ່ງ ຫຼື ທໍ່ແຈກ ໂດຍບໍ່ຜ່ານໝໍ້ແທກນ້ຳ;
5. ທຳລາຍປ່າໄມ້ ໃນບໍລິເວນຍອດແຫຼ່ງນ້ຳທຳມະຊາດ ແລະ ບໍລິເວນທີ່ອົງການປົກຄອງທ້ອງຖິ່ນໄດ້ກຳນົດໄວ້ ເພື່ອຮັບປະກັນການຜະລິດນ້ຳປະປາ.

## ມາດຕາ 49. ຂໍ້ຫ້າມສຳລັບຜູ້ບໍລິການ

ຫ້າມຜູ້ບໍລິການນ້ຳປະປາ ມີການກະທຳຕົ້ນຕໍ ດັ່ງນີ້:

1. ໃຫ້ເຊົ່າ ຫຼື ໂອນ ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານ ກ່ຽວກັບ ນ້ຳປະປາ ໃຫ້ແກ່ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຂັດຂວາງ ການກວດສອບ ແລະ ກວດກາ ກິດຈະການນ້ຳປະປາ;
3. ປິດບັງ, ບິດເບືອນ ຂໍ້ມູນ ກ່ຽວກັບການດຳເນີນງານ ທາງດ້ານວິຊາການເຕັກນິກ, ດ້ານບັນຊີການເງິນທຸລະກິດ, ດ້ານຄຸນນະພາບນ້ຳ ແລະ ອື່ນໆ;
4. ສະໜອງນ້ຳປະປາ ທີ່ບໍ່ໄດ້ຕາມມາດຕະຖານຄຸນນະພາບນ້ຳ ທີ່ກະຊວງສາທາລະນະສຸກ ວາງອອກ;
5. ສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ ເປັນຕົ້ນ ສົມຮູ້ຮ່ວມຄິດກັບຜູ້ໃຊ້ບໍລິການ ດັດແປງໝໍ້ແທກນ້ຳ ຫລື ມີການກະທຳອື່ນ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;
6. ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຕົນ ເປັນຕົ້ນ ດ້ານວິຊາການ ເຊັ່ນ: ການຕິດຕາມບູລະນະຮັກສາສ້ອມແປງ ໂຄງລ່າງນ້ຳປະປາ, ການຈົດບໍລິມາດນ້ຳປະປາທີ່ໄດ້ຊົມໃຊ້ ໃຫ້ຖືກຕ້ອງຕາມຕົວຈິງ ແລະ ຕາມກຳນົດເວລາ, ການຂຸດທາງວາງທໍ່ ແລ້ວ ຖົມດິນຄືນຕາມສະພາບເດີມ ແລະ ວາງມາດຕະການ ເພື່ອຄວາມປອດໄພ ຂອງຜູ້ໃຊ້ລົດໃຊ້ຖະໜົນ.

## ມາດຕາ 50. ຂໍ້ຫ້າມ ສຳລັບຜູ້ໃຊ້ບໍລິການ

ຫ້າມຜູ້ໃຊ້ບໍລິການ ມີການກະທຳດັ່ງນີ້:

1. ດັດແປງ ຫຼື ທຳລາຍ ໝໍ້ແທກນໍ້າ;
2. ລັກລອບ ຕໍ່ເອົານໍ້າ ໂດຍບໍ່ຜ່ານໝໍ້ແທກນໍ້າ;
3. ຕິດຕັ້ງ ຈັກສູບນໍ້າໃສ່ລະບົບທໍ່ສົ່ງ ຫຼື ທໍ່ແຈກ ໂດຍກົງ;
4. ເຮັດໃຫ້ ນໍ້າປະປາຢູ່ໃນລະບົບທໍ່ສົ່ງ ຫຼື ທໍ່ແຈກ ເປິເປື້ອນ;
5. ວາງທໍ່ ຜ່ານໜ້າທາງ ທີ່ເປັນການກີດຂວາງການສັນຈອນ;
6. ຂັດຂວາງ ຫຼື ບໍ່ໃຫ້ຄວາມຮ່ວມມື ໂດຍບໍ່ມີເຫດຜົນພຽງພໍ ແກ່ການປະຕິບັດໜ້າທີ່ຂອງຜູ້ບໍລິການ.

## ມາດຕາ 51. ຂໍ້ຫ້າມສຳລັບເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ

ຫ້າມເຈົ້າໜ້າທີ່ສະກັດກັ້ນ ແລະ ຕ້ານອັກຄີໄພ ສູບເອົານໍ້າປະປາຈາກກ໊ອກດັບເພີງສາທາລະນະ ໄປໃຊ້ຢ່າງບໍ່ຖືກຕ້ອງກັບຈຸດປະສົງ ທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້.

# ພາກທີ V
# ການແກ້ໄຂຂໍ້ຂັດແຍ່ງ

## ມາດຕາ 52. ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ອາດຈະດຳເນີນດ້ວຍຮູບການ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມກັນ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

## ມາດຕາ 53. ການໄກ່ເກ່ຍ ຫຼື ການປະນີປະນອມກັນ

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງ ໃນການດຳເນີນທຸລະກິດນໍ້າປະປາ ຄູ່ກໍລະນີສາມາດເຈລະຈາ, ໄກ່ເກ່ຍ ແລະ ປະນີປະນອມກັນ.

## ມາດຕາ 54. ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ທີ່ບໍ່ສາມາດແກ້ໄຂ ດ້ວຍຮູບການໄກ່ເກ່ຍ ຫຼື ປະນີປະນອມນຳກັນແລ້ວ ຄູ່ກໍລະນີ ມີສິດສະເໜີ ຕໍ່ຂະແໜງການທີ່ກ່ຽວຂ້ອງ ບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນ ເປັນຜູ້ແກ້ໄຂ.

**ມາດຕາ 55. ການແກ້ໄຂ ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີທີ່ຂະແໜງການທີ່ກ່ຽວຂ້ອງ ບໍ່ສາມາດໄກ່ເກ່ຍ ແລະ ແກ້ໄຂໄດ້ນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ.

**ມາດຕາ 56. ການຕັດສີນຂອງສານ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນທຸລະກິດນ້ຳປະປາ ຊຶ່ງບໍ່ສາມາດຕົກລົງກັນໄດ້ ດ້ວຍການໄກ່ເກ່ຍ ຫຼື ປະນີປະນອມ ຫຼື ການແກ້ໄຂ ທາງດ້ານບໍລິຫານ ຫຼື ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສີນ ຕາມລະບຽບກົດໝາຍ.

**ມາດຕາ 57. ການແກ້ໄຂ ທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການດຳເນີນທຸລະກິດນ້ຳປະປາ ລະຫວ່າງ ຜູ້ລົງທຶນພາຍໃນ ກັບ ຜູ້ລົງທຶນຕ່າງປະເທດ ຫຼື ຜູ້ລົງທຶນຕ່າງປະເທດດ້ວຍກັນ ຢູ່ ສປປ ລາວ ຫຼື ລະຫວ່າງ ຜູ້ລົງທຶນຕ່າງປະເທດ ກັບ ລັດ ໃຫ້ນຳໃຊ້ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງຂອງຄູ່ກໍລະນີ.

## ພາກທີ VI
## ການຄຸ້ມຄອງ ແລະ ກວດກາວຽກງານນ້ຳປະປາ
### ໝວດທີ 1
### ການຄຸ້ມຄອງວຽກງານນ້ຳປະປາ

**ມາດຕາ 58. ອົງການຄຸ້ມຄອງວຽກງານນ້ຳປະປາ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານນ້ຳປະປາໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ຂະແໜງການ ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ: ຂະແໜງການແຜນການ ແລະ ການລົງທຶນ, ອຸດສາຫະກຳ ແລະ ການຄ້າ, ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ສາທາລະນະສຸກ, ການເງິນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານນ້ຳປະປາ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ.

**ມາດຕາ 59. ສິດ ແລະ ໜ້າທີ່ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານນ້ຳປະປາ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ ເພື່ອສະເໜີ ລັດຖະບານ ພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ ໃນຂອບເຂດທົ່ວປະເທດ;
3. ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ, ແຜນການລົງທຶນ, ການພັດທະນາ, ການຂະຫຍາຍ ລະບົບໂຄງລ່າງກ່ຽວກັບນ້ຳປະປາ ແລະ ສຸຂາພິບານ;
4. ຫັນເອົາ ນະໂຍບາຍ, ແຜນຍຸດທະສາດ, ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຂະແໜງການຕົນ;
5. ຄົ້ນຄວ້າ, ກຳນົດ ກຳນົດໝາຍ, ຕົວຊີ້ບອກຜົນການດຳເນີນງານ, ມາດຕະຖານເຕັກນິກ; ຄົ້ນຄວ້າ ແລະ ເລືອກເຟັ້ນເຕັກໂນໂລຊີທີ່ເໝາະສົມ ພ້ອມທັງອອກບົດແນະນຳໃນການຈັດຕັ້ງປະຕິບັດ;
6. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບ ການລົງທຶນ, ການຂະຫຍາຍ, ການໂຈະ ແລະ ການຍົກເລີກ ກິດຈະການນ້ຳປະປາ;
7. ກໍ່ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນນ້ຳປະປາ;
8. ປະສານສົມທົບ ກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານນ້ຳປະປາ;
9. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ;
10. ສະຫຼຸບ, ລາຍງານຜົນ ຂອງການຈັດຕັ້ງປະຕິບັດວຽກງານນ້ຳປະປາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ.

**ມາດຕາ 60. ສິດ ແລະ ໜ້າທີ່ ຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານນ້ຳປະປາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນພັດທະນາ ລະບົບໂຄງລ່າງນ້ຳປະປາ ແລະ ສຸຂາພິບານ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ ໃນຂອບເຂດແຂວງ, ນະຄອນ ຂອງຕົນ;

3. ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານ ນ້ຳປະປາ ແລະ ສຸຂາພິບານ ພາຍໃນ ທ້ອງຖິ່ນ ຂອງຕົນ;
4. ສຳຫຼວດ, ເກັບກຳຂໍ້ມູນ, ສະຖິຕິ ກ່ຽວກັບ ວຽກງານນ້ຳປະປາ, ສຸຂາພິບານ ແລະ ແຫຼ່ງນ້ຳ ສຳລັບ ການຜະລິດນ້ຳປະປາ ຊຶ່ງຈະຕ້ອງໄດ້ປົກປັກຮັກສາ;
5. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບ ການລົງທຶນ, ການຂະຫຍາຍ, ການໂຈະ ແລະການ ຍົກເລີກ ກິດຈະການນ້ຳປະປາ ຢູ່ພາຍໃນແຂວງ ແລະ ນະຄອນ ຂອງຕົນ;
6. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າລາຄານ້ຳປະປາ ຢູ່ພາຍໃນ ແຂວງ, ນະຄອນ ເພື່ອນຳສະເໜີຕໍ່ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາ ທາງດ້ານວິຊາການ ກ່ອນນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນ ຕົກລົງອະນຸມັດ;
7. ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຜູ້ບໍລິການ ແລະ ຜູ້ໃຊ້ບໍລິການນ້ຳປະປາ ໃນຂອບເຂດ ແຂວງ, ນະຄອນ ຂອງຕົນ;
8. ພົວພັນ ແລະ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານ ນ້ຳປະປາ ແລະ ສຸຂາພິບານ ຕາມການມອບໝາຍ ຂອງຂັ້ນເທິງ;
9. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດວຽກງານນ້ຳປະປາ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ.

**ມາດຕາ 61. ສິດ ແລະ ໜ້າທີ່ ຂອງ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານນ້ຳປະປາ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແຜນການ, ໂຄງການ, ລະບຽບການ ແລະ ຄຳແນະນຳ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ;
2. ເຜີຍແຜ່ ລະບຽບກົດໝາຍ ກ່ຽວກັບ ວຽກງານນ້ຳປະປາ ແລະ ສຸຂາພິບານ ໃນຂອບເຂດເມືອງ, ເທດສະບານ ຂອງຕົນ;
3. ຄົ້ນຄວ້າປະກອບຄຳເຫັນ ກ່ຽວກັບການກໍ່ສ້າງລະບົບໂຄງລ່າງນ້ຳປະປາ ແລະ ສຸຂາພິບານ ຢູ່ໃນ ເຂດຈຸດສຸມພັດທະນາ ແລະ ເຂດຊົນນະບົດ ເພື່ອສະເໜີໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ພິຈາລະນາ;
4. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານນ້ຳປະປາ ແລະ ສຸຂາພິບານ ແລະ ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ຜູ້ບໍລິການ ແລະ ຜູ້ໃຊ້ບໍລິການນ້ຳປະປາ ໃນຂອບເຂດ ເມືອງ, ເທດສະບານ ຂອງຕົນ;
5. ສະຫຼຸບ, ລາຍງານ ຜົນຂອງການຈັດຕັ້ງປະຕິບັດ ວຽກງານນ້ຳປະປາ ແລະ ສຸຂາພິບານ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ.

### ມາດຕາ 62. ສິດ ແລະ ໜ້າທີ່ຂອງອົງການອື່ນທີ່ກ່ຽວຂ້ອງ

ອົງການອື່ນທີ່ກ່ຽວຂ້ອງກັບວຽກງານນ້ຳປະປາ ເປັນຕົ້ນ ອົງການປົກຄອງທ້ອງຖິ່ນ, ຂະແໜງການ ສາທາລະນະສຸກ, ຂະແໜງການຊັບພະຍາກອນນ້ຳແລະສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ເຂົ້າຮ່ວມໃນການຄຸ້ມຄອງວຽກງານນ້ຳປະປາ ຕາມພາລະບົດບາດຂອງຕົນ.

ອົງການປົກຄອງບ້ານ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ລະບຽບກົດໝາຍ ກ່ຽວກັບວຽກງານນ້ຳປະປາ ແລະ ສຸຂາພິບານ ໃນຂອບເຂດບ້ານຂອງຕົນ;
2. ຈັດຕັ້ງປະຕິບັດແຜນການ, ໂຄງການ, ລະບຽບການ ແລະ ຄຳແນະນຳ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ກ່ຽວກັບວຽກງານນ້ຳປະປາ, ສຸຂາພິບານ ແລະ ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ;
3. ອຳນວຍຄວາມສະດວກ ແກ່ຜູ້ບໍລິການນ້ຳປະປາ ພ້ອມທັງ ປຸກລະດົມປະຊາຊົນເຂົ້າຮ່ວມໃນການວາງແຜນ, ການກໍ່ສ້າງ ແລະ ການປົກປັກຮັກສາ ລະບົບໂຄງລ່າງນ້ຳປະປາ ແລະ ສຸຂາພິບານ ໃນຂອບເຂດ ບ້ານຂອງຕົນ;
4. ລາຍງານຕໍ່ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ຜູ້ບໍລິການກ່ຽວກັບວຽກງານນ້ຳປະປາ, ການສ້າງຄວາມເສຍຫາຍ ແກ່ລະບົບໂຄງລ່າງນ້ຳປະປາ ແລະ ສຸຂາພິບານ, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ ໃນຂອບເຂດບ້ານ ຂອງຕົນ;
5. ສະເໜີຕໍ່ຜູ້ບໍລິການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ກ່ຽວກັບ ການບໍລິການ, ການປັບປຸງ ແລະ ການຂະຫຍາຍ ລະບົບໂຄງລ່າງນ້ຳປະປາ ແລະ ສຸຂາພິບານ ພາຍໃນບ້ານ ຂອງຕົນ.

## ໝວດທີ 2
## ການກວດກາວຽກງານນ້ຳປະປາ

### ມາດຕາ 63. ອົງການກວດກາ

ອົງການກວດກາວຽກງານນ້ຳປະປາ ມີ ສອງ ປະເພດ ດັ່ງນີ້:

- ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານນ້ຳປະປາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ຂອງ ກົດໝາຍສະບັບນີ້;
- ອົງການກວດກາພາຍນອກ.

### ມາດຕາ 64. ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍໃນ

ໃນການກວດກາວຽກງານນ້ຳປະປາ ອົງການກວດກາພາຍໃນຂັ້ນຕ່າງໆ ມີສິດ ແລະ ໜ້າທີ່ ປະຕິບັດຕາມເນື້ອໃນ ແລະ ຮູບການການກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ແລະ 66 ຂອງກົດໝາຍສະບັບນີ້.

### ມາດຕາ 65. ເນື້ອໃນ ການກວດກາ

ການກວດກາ ວຽກງານນ້ຳປະປາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາ ການຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ, ແຜນການລົງທຶນ, ການພັດທະນາ, ການຂະຫຍາຍ ລະບົບໂຕງລ່າງ ກ່ຽວກັບ ນ້ຳປະປາ ແລະ ສຸຂາພິບານ;
2. ກວດກາ ຄວາມຄືບໜ້າ ແລະ ການປະຕິບັດມາດຕະຖານເຕັກນິກ ໃນການຈັດຕັ້ງປະຕິບັດກິດຈະການນ້ຳປະປາ ລວມທັງ ອຸປະກອນກໍ່ສ້າງ ແລະ ຕິດຕັ້ງລະບົບໂຕງລ່າງ ນ້ຳປະປາ ແລະ ສຸຂາພິບານ;
3. ກວດກາ ການປະຕິບັດ ມາດຕະຖານຄວາມປອດໄພ ແລະ ນະໂຍບາຍສະຫວັດດີການສັງຄົມ ຂອງຜູ້ອອກແຮງງານ ໃນການດຳເນີນທຸລະກິດນ້ຳປະປາ;
4. ກວດກາ ການຄຸ້ມຄອງ, ການປົກປັກຮັກສາແຫຼ່ງນ້ຳ ສຳລັບການຜະລິດນ້ຳປະປາ ແລະ ສິ່ງແວດລ້ອມ;
5. ກວດກາ ມາດຕະຖານຄຸນນະພາບນ້ຳປະປາ;
6. ກວດກາ ການນຳໃຊ້ມາດຕະການ ປ້ອງກັນ, ແກ້ໄຂ ຜົນກະທົບ ແລະ ທົດແທນຄ່າເສຍຫາຍ ຕໍ່ຊີວິດ, ສຸຂະພາບ, ຊັບສິນຂອງປະຊາຊົນ, ສາທາລະນະ ແລະ ສິ່ງແວດລ້ອມ ໃນການດຳເນີນທຸລະກິດນ້ຳປະປາ;
7. ກວດກາ ການປະຕິບັດແຜນການ ແລະ ການເງິນ ຂອງ ທຸລະກິດນ້ຳປະປາ;
8. ກວດກາ ການປະມູນ, ສັນຍາຮັບເໝົາກໍ່ສ້າງ ແລະ ຕິດຕັ້ງ ລະບົບໂຕງລ່າງນ້ຳປະປາ ແລະ ສຸຂາພິບານ, ການປະຕິບັດສັນຍາຕ່າງໆ.

### ມາດຕາ 66. ຮູບການ ການກວດກາ

ການກວດກາ ວຽກງານນ້ຳປະປາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນລະບົບປົກກະຕິ ຊຶ່ງແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານນ້ຳປະປານັ້ນ ເຈົ້າໜ້າທີ່ຂອງອົງການກວດກາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ມາດຕາ 67. ການກວດກາພາຍນອກ

ການກວດກາພາຍນອກ ມີຈຸດປະສົງກວດກາ ການປະຕິບັດໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ວຽກງານນໍ້າປະປາ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

ການກວດກາພາຍນອກ ມີ ດັ່ງນີ້:

1. ການກວດກາຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ;
2. ການກວດກາຂອງອົງການກວດກາລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດກາລັດ;
3. ການກວດສອບຂອງອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບ;
4. ການກວດກາ ດ້ວຍການເຂົ້າຮ່ວມ ຂອງ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

# ພາກທີ VII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 68. ນະໂຍບາຍ ຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃນການກໍ່ສ້າງ, ປັບປຸງ, ພັດທະນາ, ຂະຫຍາຍ, ຜະລິດ, ດຳເນີນງານ, ບູລະນະຮັກສາ ແລະ ບໍລິການນໍ້າປະປາ ຢ່າງ ມີປະສິດທິຜົນ, ມີຄຸນນະພາບ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນ ຕາມຄວາມເໝາະສົມ.

## ມາດຕາ 69. ມາດຕະການ ຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດ ຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ມາດຕາ 70. ມາດຕະການ ສຶກສາອົບຮົມ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບ ວຽກງານນໍ້າປະປາ ຫຼື ສຸຂາພິບານ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກໍຈະຖືກສຶກສາອົບຮົມ, ກ່າວເຕືອນ.

### ມາດຕາ 71. ມາດຕະການ ທາງວິໄນ

ເຈົ້າໜ້າທີ່ ຫຼື ພະນັກງານນ້ຳປະປາ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບ ວຽກງານນ້ຳປະປາ ຫຼື ສຸຂາພິບານ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍ ບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານ ການກະທຳຂອງຕົນ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກປະຕິບັດວິໄນ ຕາມລະບຽບການ ເຊັ່ນ: ກ່າວເຕືອນຄວາມຜິດ, ໂຈະການເລື່ອນຊັ້ນ ຫຼື ຖືກໄລ່ອອກຈາກການ.

### ມາດຕາ 72. ມາດຕະການ ປັບໃໝ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ລະບຽບກົດໝາຍ ກ່ຽວກັບ ວຽກງານນ້ຳປະປາ ຫຼື ສຸຂາພິບານ, ກໍ່ຄວາມເສຍຫາຍ ຊຶ່ງບໍ່ມີອົງປະກອບຂອງການກະທຳຜິດທາງອາຍາ ຈະຖືກປັບໃໝ ເນື່ອງມາຈາກການກະທຳຕົ້ນຕໍ ດັ່ງນີ້:

1. ດຳເນີນທຸລະກິດນ້ຳປະປາ ໂດຍບໍ່ໄດ້ຮັບອະນຸຍາດ;
2. ກໍ່ສ້າງແລະຕິດຕັ້ງອຸປະກອນ ແລະ ສິ່ງປະກອບສ້າງດ້ານນ້ຳປະປາ ເພື່ອເປັນການທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ຕໍ່ນ້ຳປະປາເຂົ້າເຮືອນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ໃຫ້ຜູ້ອື່ນຕໍ່ນ້ຳປະປາຈາກເຮືອນຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ດັດແປງໝໍ້ແທກນ້ຳ;
6. ບໍ່ປະຕິບັດຕາມ ມາດຕະຖານເຕັກນິກນ້ຳປະປາ ແລະ ມາດຕະການຄວາມປອດໄພ;
7. ບໍລິການ ແລະ ຊົມໃຊ້ ນ້ຳປະປາ ໂດຍບໍ່ປະຕິບັດຕາມມາດຕະການປົກປັກຮັກສາສິ່ງແວດລ້ອມ;
8. ບໍ່ເສຍພາສີອາກອນ ແລະ ບໍ່ປະຕິບັດພັນທະອື່ນ ກ່ຽວກັບ ວຽກງານນ້ຳປະປາ ຫຼື ສຸຂາພິບານ ຕາມລະບຽບກົດໝາຍ.

ອັດຕາປັບໃໝ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 73. ມາດຕະການ ທາງແພ່ງ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ລະບຽບກົດໝາຍ ກ່ຽວກັບ ວຽກງານນ້ຳປະປາ ຫຼື ສຸຂາພິບານ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຈະຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 74. ມາດຕະການ ທາງອາຍາ

ບຸກຄົນ ທີ່ໄດ້ລະເມີດ ລະບຽບກົດໝາຍ ກ່ຽວກັບ ວຽກງານນ້ຳປະປາ ຫຼື ສຸຂາພິບານ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

### ມາດຕາ 75. ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ

ຜູ້ບໍລິການນໍ້າປະປາ ມີເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຊຶ່ງກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດ.

### ມາດຕາ 76. ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 77. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ໜຶ່ງຮ້ອຍຊາວວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ